ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທຫລ ເຂົ້າອວຍພອນຄະນະນຳກະຊວງປ້ອງກັນປະເທດ ເນື່ອງໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 77 ປີ.



ໃນຕອນບ່າຍວັນທີ 19 ມັງກອນ 2026 ທີ່ກະຊວງປ້ອງກັນປະເທດ, ສະຫາຍ ນ. ບຸນຄຳ ວໍລະຈິດ ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ນໍາພາຄະນະນໍາຂອງ ທຫລ ເຂົ້າອວຍພອນຄະນະນຳກະຊວງປ້ອງກັນປະເທດ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 77 ປີ (ວັນທີ 20 ມັງກອນ 1949 - 20 ມັງກອນ 2026) ໂດຍການໃຫ້ກຽດຕ້ອນຮັບຂອງ ສະຫາຍ ພົທ. ວົງສອນ ອິນປານພິມ ຄະນະເລຂາທິການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ພ້ອມດ້ວຍຄະນະນໍາ ຂອງກະຊວງປ້ອງກັນປະເທດ.

ໃນໂອກາດວັນສຳຄັນດັ່ງກ່າວ, ສະຫາຍ ນ. ບຸນຄຳ ວໍລະຈິດ ໄດ້ຕາງໜ້າ ຄະນະພັກ-ຄະນະນຳ ທຫລ ສະແດງຄວາມຮູ້ບຸນຄຸນຕໍ່ກອງທັບປະຊາຊົນລາວ ທີ່ໄດ້ເສຍສະຫຼະເລືອດເນື້ອ ເພື່ອອຸດົມການຂອງພັກ ແລະ ຂອງປະຊາຊົນລາວບັນດາເຜົ່າ ບໍ່ວ່າຈະເປັນໄລຍະຂອງການປະຕິວັດຊາດປະຊາທິປະໄຕ ກໍຄືໄລຍະແຫ່ງການປະຕິບັດ 2 ໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຈົນເຮັດໃຫ້ ສປປ ລາວ ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ປົກປັກຮັກສາອະທິປະໄຕ ແລະ ເຂດນ້ຳແດນດິນໄວ້ໄດ້ຢ່າງຄົບຖ້ວນ, ປະເທດຊາດໄດ້ຮັບການສ້າງສາພັດທະນາ ໃຫ້ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆມາ. ພ້ອມກັນນີ້ ທຫລ ຍັງໄດ້ປະກອບສ່ວນຊຸກຍູ້ການເຄື່ອນໄຫວຂອງກອງທັບປະຊາຊົນລາວ ເປັນເງິນມູນຄ່າ 100 ລ້ານກີບ.



ຂ່າວ-ພາບ: ທະນາຄານແຫ່ງ ສປປ ລາວ

ຢູ່ເມືອງລາວໃຊ້ເງິນກີບລາວ